ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 233 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 19 ມິຖຸນາ 2019

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ການປະກາດໃຫ້ສັດຕະຍາບັນແກ່ອະນຸສັນຍາ ເລກທີ 2 ວ່າດ້ວຍການກຳນົດດ່ານພາສີອາຊຽນໃນການຂົນສົ່ງສິນຄ້າຜ່ານແດນ.

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017 ມາດຕາ 44;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບ ເລກທີ 11 /ຄປຈ, ລົງວັນທີ 30 ພຶດສະພາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຫ້ສັດຕະຍາບັນແກ່ອະນຸສັນຍາເລກທີ 2 ວ່າດ້ວຍການກຳນົດດ່ານພາສີອາຊຽນໃນການຂົນສົ່ງສິນຄ້າຜ່ານແດນ.

ມາດຕາ 2 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດສັນຍາສາກົນສະບັບນີ້ ມອບໃຫ້ກະຊວງການຕ່າງປະເທດ ຈັດຕັ້ງປະຕິບັດຕາມຂັ້ນຕອນທາງການທູດຕາມກົດໝາຍ ແລະ ລະບຽບການ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ